# ບົດປາຖະກະຖາ

## ມູນເຊື້ອ 36 ປີ ຂອງສານປະຊາຊົນ ແຫ່ງ ສປປ ລາວ.

ດັ່ງທີ່ຮູ້ແລ້ວວ່າ: ວັນທີ 15 ສິງຫາ 1982 ຖືເປັນວັນສ້າງຕັ້ງສານປະຊາຊົນ ແຫ່ງ ສປປ ລາວ. ຊຶ່ງປີ 2018ນີ້ ໄດ້ໝູນວຽນມາຄົບຮອບ 36 ປີ (15 ສິງຫາ 1982-15 ສິງຫາ 2018). ບົນເສັ້ນທາງແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວ ຂອງສານປະຊາຊົນ ແມ່ນໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ສັບສົນ, ລະອິດລະອ້ຽວ ແລະ ສິ່ງທົດສອບ, ທ້າທາຍຫລາຍປະການ ໃນການປະຕິບັດໜ້າທີ່ວຽກງານ ເພື່ອປະກອບສ່ວນເຂົ້າ ໃນການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍ, ເຮັດໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດມີການຂະຫຍາຍຕົວ, ສັງຄົມມີຄວາມສາມັກຄີປອງດອງ ແລະ ຍຸຕິທຳ.

ເນື່ອງໃນໂອກາດອັນສະຫງ່າລາສີ ແລະ ວັນທີ່ມີຄວາມໝາຍສຳຄັນທາງປະຫວັດສາດນີ້, ມື້ນີ້ພວກເຮົາໄດ້ພ້ອມກັນທົບທວນທວນຄືນເຖິງມູນເຊື້ອ ແລະ ຜົນງານການເຄື່ອນໄຫວຂອງສານປະຊາຊົນ. **ດັ່ງຄຳເວົ້າທີ່ວ່າ: ມີອະດີດຈຶ່ງມີປະຈຸບັນ ມີປະຈຸບັນຈຶ່ງມີອະນາຄົດ ອະດີດແມ່ນໜ້າທີ່ຂອງບັນພະບູລຸດ ເພິ່ນໄດ້ເຮັດສຳເລັດຫຼ້ອນໜ້າທີ່ແລ້ວ ປະຈຸບັນແມ່ນໜ້າທີ່ຂອງພວກເຮົາທຸກຄົນ ສ່ວນອານາຄົດແມ່ນໜ້າທີ່ຂອງພວກລູກ ພວກຫຼານຮຸ່ນຕໍ່ໄປ. ກິນເຂົ້າຢ່າລືມນາ ກິນປາຢ່າລືມນ້ຳ ກິນນ້ຳຢ່າລືມບໍ່ນ້ຳ.**

## ບັນດາສະຫາຍທີ່ນັບຖື.

ພາຍຫຼັງສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ, ພັກ ແລະ ລັດ ໄດ້ນຳພາປະຊາຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ ເປັນຕົ້ນໄດ້ສຸມໃສ່ ຮ່ຳບາດແຜສົງຄາມ, ຟື້ນຟູເສດຖະກິດ ແລະ ວັດທະນະທຳຂອງລະບອບໃໝ່, ປັບປຸງອຳນາດການປົກຄອງປະຕິວັດ ໃຫ້ເຂັ້ມແຂງ, ປົວແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໃຫ້ປົກກະຕິ ແລະ ພັດທະນາເສດຖະກິດ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ. ໃນເວລາດຽວກໍຍຶດໝັ້ນທາດແທ້ ອຸດົມການ ແລະ ແນວທາງຂອງພັກ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍເທື່ອລະກ້າວ. ຊຶ່ງໃນເບື້ອງຕົ້ນ ແມ່ນກະຊວງຍຸຕິທຳເຮັດໜ້າທີ່ຕົ້ນຕໍ ໃນການຈັດຕັ້ງປະຕິບັດກົດໝາຍ ເພື່ອປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງລັດ, ຂອງປະຊາຊົນ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ, ຕ້ານຄືນທຸກປະກົດການທີ່ສັດຕູ ແລະ ພວກຄົນບໍ່ດີກໍ່ຂຶ້ນ ໂດຍຖືເອົາຄຳສັ່ງສະບັບເລກທີ 53 / ນຍ ລົງວັນທີ 15 ຕຸລາ 1976 ຂອງສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການຈັບຕົວ, ການສືບສວນ ແລະ ການຕັດສິນຜູ້ກະທຳຜິດ ເປັນບ່ອນອີງໃນການເຄື່ອນໄຫວ ແລະ ຕັດສິນຄະດີ. ເພື່ອບັນລຸທາດແທ້ອຸດົມການຂອງພັກທີ່ຈະຫັນການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ໃຫ້ມີການພັດທະນາດີຂຶ້ນເທື່ອລະກ້າວ, ກອງປະຊຸມກົມການເມືອງເປີດກວ້າງ ຄັ້ງວັນທີ 04 ສິງຫາ 1976 ຈຶ່ງໄດ້ພິຈາລະນາກ່ຽວກັບ ການປະຕິບັດໜ້າທີ່ວິຊາສະເພາະຂອງບັນດາກະຊວງ ໂດຍໄດ້ແຕ່ງຕັ້ງຄະນະຄົ້ນຄວ້າວຽກງານວິຊາສະເພາະ ຂອງກະຊວງຍຸຕິທຳຂຶ້ນ ຊຶ່ງປະກອບດ້ວຍ 3 ທ່ານຄື: ທ່ານ ອຸ່ນເນື້ອ ພົມມະສອນ ເປັນຫົວໜ້າ, ທ່ານ ບົວເກດ ເປັນຮອງ ແລະ ທ່ານ ນວນຕາ ເປັນຄະນະ ຕາມມະຕິວ່າດ້ວຍການແຕ່ງຕັ້ງຄະນະຄົ້ນຄວ້າວຽກງານວິຊາສະເພາະຮອບດ້ານ ຂອງພັກປະຈຳກະຊວງຍຸຕິທຳ ສະບັບເລກທີ102/ກກມສກ ລົງວັນທີ 13 ທັນວາ 1976 ເພື່ອຄົ້ນຄວ້າແຜນນະໂຍບາຍ, ນະໂຍ

ບາຍວຽກງານວິຊາສະເພາະຢ່າງຮອບດ້ານ ຂອງກະຊວງຍຸຕິທຳ. ສະພາບແວດລ້ອມດັ່ງກ່າວພາໃຫ້ມີການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງສານປະຊາຊົນມາເຖິງທຸກວັນນີ້. ຊຶ່ງພວກເຮົາສາມາດສະຫລຸບສັງລວມໄລຍະແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວ ຂອງສານປະຊາຊົນອອກເປັນ 5 ໄລຍະ ຄື:

**1.<u>ໄລຍະແຫ່ງການກຳເນີດສານປະຊາຊົນ</u> (1975-1982)**

ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ໃນເບື້ອງຕົ້ນບໍ່ມີການຈັດຕັ້ງຂອງສານປະຊາຊົນ ແຕ່ການເຄື່ອນໄຫວດຳເນີນຕັດສິນຄະດີ ແມ່ນຂຶ້ນກັບກະຊວງຍຸຕິທຳ ໂດຍແມ່ນກົມພິພາກສາຂອງກະຊວງຍຸຕິທຳ ເຮັດໜ້າທີ່ໃນການຊີ້ນຳການພິຈາລະນາຕັດສິນຄະດີຢູ່ໃນແຕ່ລະທ້ອງຖິ່ນ ໂດຍອີງໃສ່ຄຳສັ່ງຂອງສຳນັກງານນາຍົກລັດຖະມົນຕີສະບັບເລກທີ 53/ນຍ ລົງວັນທີ 15 ຕຸລາ 1976 ກ່ຽວກັບການຈັບຕົວ, ການສືບສວນ ແລະ ການຕັດສິນຜູ້ກະທຳຜິດ ເປັນພື້ນຖານໃນການພິຈາລະນາຕັດສິນຄະດີ ຊຶ່ງແບ່ງອອກເປັນ 3 ຂັ້ນຄື:

- ຢູ່ຂັ້ນເມືອງ ແມ່ນຂະແໜງຍຸຕິທຳຂອງເມືອງ ເຮັດໜ້າທີ່ເປັນສານຕັດສິນ ເມື່ອມີຄະດີເກີດຂຶ້ນ ຄະນະປົກຄອງເມືອງຈະສະເໜີຕໍ່ຄະນະປົກຄອງແຂວງ ເພື່ອແຕ່ງຕັ້ງເອົາຫົວໜ້າຄະແໜງ ຍຸຕິທຳເມືອງເປັນຫົວໜ້າສານຕັດສິນ ພ້ອມດ້ວຍຕຸລາການປະຊາຊົນສອງຄົນ ເປັນຄະນະ ແລະ ແຕ່ງຕັ້ງເອົາຄະນະ ປກສ ເມືອງເປັນໄອຍະການ.

- ຢູ່ຂັ້ນແຂວງ ຫລື ກຳແພງນະຄອນ ແມ່ນພະແນກຍຸຕິທຳແຂວງ, ກຳແພງນະຄອນ ຮັບຜິດຊອບເປັນສານຕັດສິນ ເມື່ອມີຄະດີເກີດຂຶ້ນຄະນະປົກຄອງແຂວງ, ກຳແພງນະຄອນຈະສະເໜີຕໍ່ລັດຖະມົນຕີວ່າການກະຊວງຍຸຕິທຳ ເພື່ອແຕ່ງຕັ້ງເອົາຮອງຫົວໜ້າພະແນກຍຸຕິທຳ ເປັນຫົວໜ້າສານຕັດສິນ ພ້ອມດ້ວຍຕຸລາການປະຊາຊົນສອງຄົນເປັນຄະນະ ແລະ ແຕ່ງຕັ້ງເອົາຄະນະ ປກສ ເປັນໄອຍະການ.

-ຢູ່ຂັ້ນສູນກາງ ແມ່ນກົມຜູ້ພິພາກສາ ຮັບຜິດຊອບພິຈາລະນາຕັດສິນຄະດີ ໃນລະດັບສູນກາງ ເມື່ອມີຄະດີເກີດຂຶ້ນ ລັດຖະມົນຕີວ່າການກະຊວງຍຸຕິທຳຈະແຕ່ງຕັ້ງສານເພື່ອຕັດສິນຄະດີ.

ສັງລວມແລ້ວໃນໄລຍະນີ້ ບໍ່ມີການຈັດຕັ້ງທີ່ຖາວອນຂອງສານ ແຕ່ເມື່ອມີຄະດີເກີດຂຶ້ນ ຈະແຕ່ງຕັ້ງສານຂຶ້ນ ເພື່ອພິຈາລະນາຕັດສິນຄະດີ ເມື່ອຕັດສິນສຳເລັດການຈັດຕັ້ງຂອງສານ ກໍ່ຈະສິ້ນສຸດໄປ ແລະ ເມື່ອມີຄະດີໃໝ່ເກີດຂຶ້ນ ກໍ່ແຕ່ງຕັ້ງຂຶ້ນໃໝ່ຕາມຕົວຈິງ ຊຶ່ງການຕັດສິນຄະດີສ່ວນໃຫຍ່ແມ່ນຄະດີອາຍາ ທີ່ພົວພັນກັບພວກທີ່ທໍລະຍົດຕໍ່ການປະຕິວັດ ແລະ ພວກທີ່ມີໂທດກຳຮ້າຍແຮງ ຕໍ່ສິດຜົນປະໂຫຍດຂອງປະຊາຊົນ ຜູ້ອອກແຮງງານ. ແຕ່ເຖິງຢ່າງໃດກໍຕາມ ກໍຖືວ່າເປັນບາດກ້າວແຫ່ງການກຳເນີດ ຂອງລະບົບການຈັດຕັ້ງຂອງສານປະຊາຊົນ.

**2.<u>ໄລຍະແຫ່ງການສ້າງຕັ້ງສານປະຊາຊົນ</u> (1982-1989).**

ໂດຍອີງໃສ່ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ ທີ່ຕ້ອງເພີ່ມທະວີການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍ ໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງຂຶ້ນເທື່ອລະກ້າວ. ຄະນະຄົ້ນຄວ້າວຽກງານວິຊາສະເພາະ ຂອງກະຊວງຍຸຕິທຳ ຈຶ່ງໄດ້ສະເໜີລາຍງານຕໍ່ສູນກາງພັກ ກ່ຽວກັບການຈັດຕັ້ງ ຂອງສານປະຊາຊົນ ຕໍ່ມາພັກ ແລະ ລັດ ກໍໄດ້ຕົກລົງສ້າງຕັ້ງສານປະຊາຊົນຂຶ້ນຢ່າງເປັນຮູບປະທຳ ໃນວັນທີ 15 ສິງຫາ 1982 ຕາມມະຕິຕົກລົງສະບັບເລກທີ 01/83/ສປສ ລົງວັນທີ 11 ມັງກອນ 1983 ຂອງຄະນະປະຈຳສະພາປະຊາຊົນສູງສຸດ ຊຸດທີ I ພ້ອມດຽວກັນນັ້ນ ກໍໄດ້ແຕ່ງຕັ້ງ ທ່ານ ອຸ່ນເນື້ອ ພົມມະສອນ ເປັນ ປະທານສານສູງສຸດ, ພ້ອມທັງມອບໜ້າທີ່ ໃຫ້ເປັນຜູ້ຮ່າງໂຄງປະກອບການຈັດຕັ້ງ, ກົດລະບຽບພາຍໃນສານປະຊາຊົນສູງສຸດ ເພື່ອນຳ

ສະເໜີຕໍ່ຄະນະປະຈໍາສະພາປະຊາຊົນສູງສຸດ ພິຈາລະນາຊຶ່ງໃນເບື້ອງຕົ້ນ ສານປະຊາຊົນສູງສຸດເອີ້ນວ່າ“ສານສູງສຸດ” ຕໍ່ມາຈຶ່ງໄດ້ປ່ຽນຊື່ມາເປັນສານປະຊາຊົນສູງສຸດ ຕາມມະຕິຂອງຄະປະຈໍາສະພາປະຊາຊົນສູງສຸດ ສະບັບເລກທີ 74/ສປສ ລົງວັນທີ 30 ທັນວາ 1983. ຊຶ່ງການສ້າງຕັ້ງສານປະຊາຊົນສູງສຸດນັ້ນ ແມ່ນໄດ້ແຍກກົມພິພາກສາ ທີ່ຂຶ້ນກັບກະຊວງຍຸຕິທໍາມາສ້າງເປັນສານປະຊາຊົນສູງສຸດ ອັນເຮັດໃຫ້ການຈັດຕັ້ງຂອງສານຢູ່ສູນກາງໃນເມື່ອກ່ອນ ທີ່ແມ່ນກົມພິພາກສາເຮັດໜ້າທີ່ຕັດສິນຄະດີນັ້ນ ໄດ້ຕົກມາຢູ່ໃນຄວາມຮັບຜິດຊອບຂອງສານປະຊາຊົນສູງສຸດ; ສ່ວນຢູ່ຂັ້ນທ້ອງຖິ່ນກໍໄດ້ສ້າງຕັ້ງສານປະຊາຊົນ ໃຫ້ຂຶ້ນກັບພະແນກຍຸຕິທໍາແຂວງ, ກໍາແພງນະຄອນ ແລະ ເມືອງ ຊຶ່ງທັງໝົດແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທໍາ. ໜ້າທີ່ຕົ້ນຕໍຂອງສານປະຊາຊົນໃນເວລານັ້ນ ແມ່ນພິຈາລະນາຕັດສິນຄະດີໃຫ້ມີຄວາມຖືກຕ້ອງ ແລະ ເປັນທໍາ ແນໃສ່ປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລັດ ແລະ ຂອງປະຊາຊົນລາວບັນດາເຜົ່າ.

ໃນເບື້ອງຕົ້ນ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສານປະຊາຊົນ ແມ່ນພົບຫຼາຍບັນຫາ, ມີສິ່ງທ້າທາຍ, ທົດສອບຫລາຍປະການເຊັ່ນ: ພະນັກງານບໍ່ພຽງພໍ, ຂາດພາຫະນະ, ອຸປະກອນ, ງົບປະມານມີໜ້ອຍ, ບໍ່ທັນມີກົດໝາຍເປັນບ່ອນອີງ ແລະ ສະພາບແນວຄິດຂອງອໍານາດການປົກຄອງ, ທະຫານ, ຕໍາຫຼວດ, ຂ້າລາຊະການທີ່ຖືກປະຊາຊົນໂຄ່ນລົ້ມໄປນັ້ນຈໍານວນໜຶ່ງຍັງມີແນວຄິດປໍລະປັກ ແລະ ອື່ນໆ. ເຖິງແມ່ນວ່າຈະພົບຄວາມຫຍຸ້ງຍາກຫລາຍດ້ານດັ່ງທີ່ກ່າວມານັ້ນກໍຕາມ ແຕ່ຍ້ອນມີແນວທາງນະໂຍບາຍອັນຖືກຕ້ອງ ມີການຊີ້ນໍາ-ນໍາພາຂອງພັກຢ່າງໃກ້ສິດ; ຄະນະພັກ ຄະນະນໍາ ສານປະຊາຊົນສູງສຸດ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດຂອງພະນັກງານສານປະຊາຊົນ ໃຫ້ເພີ່ມທະວີ ແລະ ຍົກສູງຄວາມຮັບຜິດຊອບ, ມີຄວາມສາມັກຄີ ເປັນຈິດໜຶ່ງໃຈດຽວ, ຍົກສູງຈິດໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນອັນເຮັດໃຫ້ສານປະຊາຊົນຜ່ານຜ່າຂໍ້ຫຍຸ້ງຍາກຕ່າງໆ ແລະໄດ້ເຄື່ອນໄຫວຢ່າງຕັ້ງໜ້າປະກອບສ່ວນ ໃນການປະຕິບັດສອງໜ້າທີ່ຍຸດທະສາດ ເຮັດໃຫ້ບັນດາຂໍ້ຂັດແຍ່ງ, ການລະເມີດກົດໝາຍ ແລະ ບັນຫາຕ່າງໆ ທີ່ເກີດຂື້ນ ຖືກແກ້ໄຂ ແລະ ລຸດໜ້ອຍຖອຍລົງເທື່ອລະກ້າວ, ເຮັດໃຫ້ສັງຄົມມີຄວາມສະຫງົບໂດຍພື້ນຖານ.

**3. <u>ໄລຍະແຫ່ງການກໍ່ສ້າງ ແລະ ພັດທະນາລະບົບສານປະຊາຊົນ</u>(1989 - 2003).**

ໃນປີ 1986 ພັກ ແລະ ລັດຖະບານ ໄດ້ປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ອັນໄດ້ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ມີການຂະຫຍາຍຕົວຢ່າງວ່ອງໄວ, ບັນດາສິ່ງຫຍໍ້ທໍ້, ຂໍ້ຂັດແຍ່ງສັງຄົມມີໜໍ່ແໜງຂະຫຍາຍຕົວຂື້ນໃນສັງຄົມ. ດັ່ງນັ້ນ ລະບົບສານປະຊາຊົນ ກໍໄດ້ປັບປຸງໃຫ້ມີປະສິດທິພາບສູງຂຶ້ນ. ໃນວັນທີ 23 ທັນວາ 1989, ກົດໝາຍວ່າດ້ວຍສານປະຊາຊົນສະບັບທໍາອິດ ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນຄົບຄະນະ ເທື່ອທີ 2 ຂອງສະພາປະຊາຊົນຊຸດທີ II ແລະ ປະກາດໃຊ້ຢ່າງເປັນທາງການຕາມລັດຖະດໍາລັດ ຂອງປະທານປະເທດ ສະບັບເລກທີ 06/ປທປທ ລົງວັນທີ 09 ມັງກອນ 1990 ຊຶ່ງຖືວ່າເປັນຂີດໝາຍປະຫວັດສາດ ທີ່ສໍາຄັນແຫ່ງການສ້າງຕັ້ງສານປະຊາຊົນຂຶ້ນຢ່າງເປັນຮູບປະທໍາ ແລະ ເປັນລະບົບ. ໄປພ້ອມດຽວກັນນັ້ນ, ໃນວັນທີ 14 ສິງຫາ 1991 ລັດຖະທໍາມະນູນສະບັບທໍາອິດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖືກຮັບຮອງໃນກອງປະຊຸມຄັ້ງທີ 6 ສະໄໝສາມັນຂອງສະພາປະຊາຊົນສູງສຸດ ຊຸດທີ II ແລະ ປະກາດໃຊ້ຢ່າງເປັນທາງການຕາມລັດຖະດໍາລັດຂອງປະທານປະເທດສະບັບເລກທີ 55/ປທປທ ລົງວັນທີ 15 ສິງຫາ

1991, ໃນມາດຕາ 65 ໄດ້ກຳນົດວ່າ: " **ສານປະຊາຊົນ ແມ່ນອົງການພິພາກສາຂອງລັດ ຊຶ່ງປະກອບດ້ວຍສານປະຊາຊົນສູງສຸດ, ສານປະຊາຊົນແຂວງ, ກຳແພງນະຄອນ, ສານປະຊາຊົນເມືອງ ແລະ ສານທະຫານ...**" ນັບແຕ່ນັ້ນມາ ບໍ່ວ່າຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນການຈັດຕັ້ງຂອງສານໄດ້ສ້າງຕັ້ງຂຶ້ນ ຢ່າງເປັນຮູບ ເປັນຮ່າງທີ່ຊັດເຈນ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ໄດ້ປະກາດສ້າງຕັ້ງສານປະຊາຊົນແຂວງ, ກຳແພງນະຄອນ ແລະ ສານປະຊາຊົນເມືອງຂຶ້ນ ໂດຍໄດ້ແຕ່ງຕັ້ງປະທານ, ຮອງປະທານ ແລະ ຜູ້ພິພາກສາ ເພື່ອພິຈາລະນາຕັດສິນຄະດີ ພ້ອມທັງປະກອບພະນັກງານຊ່ວຍວຽກໃຫ້ສານປະຊາຊົນ ຕາມຄວາມເໝາະສົມ. ເຖິງຢ່າງໃດກໍຕາມການຈັດຕັ້ງ ແລະ ການບໍລິຫານສານປະຊາຊົນ ໃນເວລານັ້ນຍັງຂຶ້ນກັບກະຊວງຍຸຕິທຳ ໂດຍປະທານສານປະຊາຊົນທ້ອງຖິ່ນ ຈະຮັບຜິດຊອບເປັນຮອງຫົວໜ້າພະແນກຍຸຕິທຳແຂວງ, ກຳແພງນະຄອນ ແລະ ເມືອງ.

ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍສະເພາະມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ໄດ້ກຳນົດວ່າ " **ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີແຕ່ສານເທົ່ານັ້ນ ທີ່ມີສິດອຳນາດພິພາກສາຄະດີ ບົນພື້ນຖານການເຄົາລົບກົດໝາຍຢ່າງເຂັ້ມງວດ** " ຊຶ່ງໄດ້ແບ່ງສິດອຳນາດຂອງສານປະຊາຊົນແຕ່ລະຂັ້ນ ໃນການພິຈາລະນາຕັດສິນຄະດີຄື:

- ສານປະຊາຊົນເມືອງ ມີສິດອຳນາດໃນການພິຈາລະນາຄື ເປັນຂັ້ນຕົ້ນ: ຄະດີແພ່ງ ມີມູນຄ່າບໍ່ເກີນ ຫ້າແສນກີບ ແລະ ບໍ່ຂຶ້ນກັບສິດອຳນາດຂອງສານອື່ນ, ຄະດີອາຍາທີ່ກຳນົດໂທດຕັດອິດສະລະພາບສູງສຸດ ບໍ່ເກີນສອງປີ ແລະ ບໍ່ຂຶ້ນກັບສິດອຳນາດຂອງສານອື່ນ;

- ສານປະຊາຊົນແຂວງ, ກຳແພງນະຄອນ ແລະ ສານເຂດພິເສດ ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຕົ້ນ ຄະດີແພ່ງ ແລະ ຄະດີອາຍາ ທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ ແລະ ສານອື່ນ, ເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນເມືອງໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ແລະ ເປັນຂັ້ນຕິດຕາມກວດກາຄຳຕັດສິນທີ່ໃຊ້ໄດ້ເດັດຂາດຂອງສານປະຊາຊົນເມືອງ ບົນພື້ນຖານການສະເໜີຄັດຄ້ານຂອງໄອຍະການປະຊາຊົນ;

- ສານປະຊາຊົນສູງສຸດພິຈາລະນາເປັນຂັ້ນຕົ້ນ ແລະ ເດັດຂາດ ຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ແລະ ມີຄວາມສຳຄັນເປັນພິເສດ, ພິຈາລະນາເປັນຂັ້ນລົບລ້າງ ຄະດີທີ່ສານປະຊາຊົນແຂວງ, ກຳແພງນະຄອນ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ແລະ ຂັ້ນຕິດຕາມກວດກາຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕາມການສະເໜີຄັດຄ້ານຂອງອະທິໄອຍະການປະຊາຊົນ.

ເພື່ອເຮັດສຳເລັດຫລ້ອນໜ້າທີ່ດັ່ງກ່າວ, ຄະນະນຳຂອງສານປະຊາຊົນແຕ່ລະຂັ້ນ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາການເຄື່ອນໄຫວວຽກງານຂອງສານ ເພື່ອຮັບປະກັນການປະຕິບັດໜ້າທີ່ ໃຫ້ມີຄວາມເຂັ້ມແຂງຮອບດ້ານ ແລະ ຮັບປະກັນຄວາມຍຸຕິທຳ ໂດຍໄດ້ເລັ່ງໃສ່ແກ້ໄຂຄະດີຢູ່ແຕ່ລະຂັ້ນ ໃຫ້ມີຄວາມຍຸຕິທຳ ຫຼີກເວັ້ນການນຳໃຊ້ຊ່ອງຫວ່າງຂອງກົດໝາຍ ເພື່ອເອົາລັດເອົາປຽບກັນໃນສັງຄົມ; ພ້ອມດຽວກັນນັ້ນ ກໍພັດທະນະກົນໄກການດຳເນີນຄະດີໃຫ້ມີຄວາມຮັດກຸມ ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ເທື່ອລະກ້າວ.

4. <u>**ໄລຍະແຫ່ງການປັບປຸງ ແລະ ພັດທະນາລະບົບສານປະຊາຊົນ**</u> ( 2003-2009 ).

ເປັນເວລາທີ່ດສະວັດກວ່າ ທີ່ສານປະຊາຊົນຢູ່ທ້ອງຖິ່ນ ໄດ້ສ້າງຕັ້ງຢ່າງເປັນລະບົບ ແລະ ມີການປັບປຸງພັດທະນາເປັນກ້າວໆມາ. ເຖິງຢ່າງໃດກໍຕາມສະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໄດ້ຂະ

ຫຍາຍຕົວຢ່າງວ່ອງໄວ ແລະ ສະພາບຂໍ້ຂັດແຍ່ງໃນສັງຄົມ ກໍເກີດຂຶ້ນຢ່າງຫລວງຫລາຍ ແລະ ສັບສົນ ຂຶ້ນກວ່າເກົ່າ, ຄວາມຮຽກຮ້ອງຕ້ອງການໃນການບໍລິການຮັບໃຊ້ປະຊາຊົນ ໃຫ້ມີຄວາມສະດວກ ແລະ ເຂົ້າເຖິງຂະບວນການດຳເນີນຄະດີຂອງສານງ່າຍຂຶ້ນ ເປັນສິ່ງຈຳເປັນ ແລະ ຮຽກຮ້ອງໃຫ້ມີການປັບປຸງລະບົບສານປະຊາຊົນ ຄືນໃໝ່. ດັ່ງນັ້ນ ໃນປີ 2003 ຈຶ່ງໄດ້ມີການປັບປຸງລະບົບສານປະຊາຊົນ ໂດຍໄດ້ສ້າງຕັ້ງສານອຸທອນຂຶ້ນ ຢູ່ໃນສາມພາກ ແລະ ໂອນສານປະຊາຊົນທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທຳ ມາຢູ່ພາຍໃຕ້ການຄຸ້ມຄອງບໍລິຫານຂອງສານປະຊາຊົນສູງສຸດ. ເຮັດໃຫ້ລະບົບການຈັດຕັ້ງຂອງສານປະຊາຊົນໃນໄລຍະນີ້ ປະກອບດ້ວຍ: ສານປະຊາຊົນສູງສຸດ; ສານອຸທອນ; ສານປະຊາຊົນແຂວງ , ນະຄອນ; ສານປະຊາຊົນເມືອງ, ເທດສະບານ; ສານທະຫານ.

ນອກຈາກການປັບປຸງລະບົບການຈັດຕັ້ງແລ້ວ ຍັງໄດ້ປັບປຸງກົນໄກດຳເນີນຄະດີມີຄວາມວ່ອງໄວ, ລົງເລິກແຕ່ລະບັນຫາ, ຖືກຕ້ອງ ແລະ ຍຸຕິທຳ ໂດຍໄດ້ແຍກຄະນະສານອອກເປັນ 5 ຄະນະສານຄື: ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ ແລະ ຄະນະສານເດັກ.

ຈຸດສຳຄັນຂອງການປັບປຸງລະບົບສານປະຊາຊົນໃນຄັ້ງນີ້ ອັນສຳຄັນແມ່ນການໂອນການຈັດຕັ້ງ ແລະ ການບໍລິຫານຕໍ່ສານປະຊາຊົນທ້ອງຖິ່ນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທຳ ມາຢູ່ພາຍໃຕ້ການຄຸ້ມຄອງຂອງສານປະຊາຊົນສູງສຸດ ຢ່າງຮອບດ້ານ, ຊຶ່ງຖືວ່າເປັນສິ່ງທ້າທາຍຢ່າງໃຫຍ່ຫລວງຕໍ່ສານປະຊາຊົນສູງສຸດ, ດັ່ງນັ້ນ ຈຶ່ງໄດ້ຫລຸດບົດບາດຂອງສານປະຊາຊົນສູງສຸດ ໃນການພິຈາລະນາຕັດສິນຄະດີລົງ ໂດຍໃຫ້ສານປະຊາຊົນສູງສຸດ ມີອຳນາດພິຈາລະນາຄະດີພຽງແຕ່ເປັນຂັ້ນລົບລ້າງ ສະເພາະແຕ່ທາງດ້ານກົດໝາຍເທົ່ານັ້ນ ເພື່ອໃຫ້ສານປະຊາຊົນສູງສຸດ ເຮັດໜ້າທີ່ຢ່າງເຕັມສ່ວນ ໃນການຄຸ້ມຄອງມະຫາພາກ ຕໍ່ສານປະຊາຊົນທ້ອງຖິ່ນ, ໂດຍໄດ້ສ້າງຕັ້ງ ສານອຸທອນຂຶ້ນ ເພື່ອພິຈາລະນາຄະດີເປັນຂັ້ນອຸທອນ ແລະ ຂັ້ນສຸດທ້າຍທາງດ້ານຂໍ້ມູນຫລັກຖານ ເພື່ອຈຳກັດບໍ່ໃຫ້ຄະດີຂຶ້ນມາຫາສານປະຊາຊົນສູງສຸດ. ພ້ອມດຽວກັນນັ້ນ ກົງຈັກຊ່ວຍວຽກຂອງສານປະຊາຊົນ ກໍໄດ້ມີການປັບປຸງ ຊຶ່ງປະກອບມີ: ຫ້ອງການ, ກົມຈັດຕັ້ງ-ພະນັກງານ, ກົມຄຸ້ມຄອງ-ກວດກາ ແລະ ສະຖິຕິສານ ແລະ ສູນບຳລຸງຜູ້ພິພາກສາ, ທາງດ້ານຈຳນວນພົນຂອງສານ ກໍໄດ້ມີການບັນຈຸສັບຊ້ອນເຂົ້າໃໝ່ຢ່າງເໝາະສົມ. ເພື່ອເຮັດໃຫ້ສານປະຊາຊົນສູງສຸດ ສາມາດຄຸ້ມຄອງບໍລິຫານ ຕໍ່ສານທ້ອງຖິ່ນໄດ້ຢ່າງສະດວກ ແລະ ມີປະສິດທິພາບ. ເຖິງຢ່າງໃດກໍຕາມທາງດ້ານງົບປະມານຂອງສານປະຊົນທ້ອງຖິ່ນ ແມ່ນຍັງຂຶ້ນກັບອຳນາດການປົກຄອງທ້ອງຖິ່ນ.

**5.<u>ໄລຍະແຫ່ງການພັດທະນາລະບົບສານປະຊາຊົນ</u>(2009 - ປັດຈຸບັນ).**

ຄຽງຄູ່ກັບການພັດທະນາລະບົບສານປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ ແລະ ການພັດທະນາດ້ານຕ່າງໆ ຂອງປະເທດ ໄດ້ມີການພັດທະນາຢ່າງວ່ອງໄວ ພ້ອມນັ້ນໃນປີ 2009 ລັດຖະບານ ກໍໄດ້ຄົ້ນຄວ້າ ແລະ ຮັບຮອງເອົາແຜນຍຸດທະສາດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ. ດັ່ງນັ້ນ ສານປະຊາຊົນ ຈຶ່ງໄດ້ທົບທວນຄືນບົດບາດ, ສິດ, ໜ້າທີ່ ແລະ ລະບົບການຈັດຕັ້ງຂອງຕົນ ເພື່ອໃຫ້ການເຄື່ອນໄຫວວຽກງານ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ການເຊື່ອມໂຍງກັບສາກົນ ແລະ ພາກພື້ນ. ຄະນະພັກຄະນະນຳ ຂອງສານປະຊາຊົນສູງສຸດ ຈຶ່ງໄດ້ສະເໜີປັບປຸງ ແລະ ພັດທະນາລະບົບສານປະຊາ

ຊົນ; ຊຶ່ງຄະນະປະຈຳສະພາແຫ່ງຊາດ ກໍໄດ້ອອກມະຕິຕົກລົງສະບັບເລກທີ 113/ຄປຈ ລົງວັນທີ 28 ພຶດສະພາ 2009 ກ່ຽວກັບການໂຮມສານປະຊາຊົນເມືອງເປັນສານປະຊາຊົນເຂດ ແລະ ເພີ່ມສິດອຳນາດໃຫ້ສານປະຊາຊົນເຂດໃນການພິຈາລະນາຕັດສິນຄະດີ ແລະ ມະຕິຕົກລົງສະບັບເລກທີ 179/ຄປຈ ລົງ ວັນທີ 05 ຕຸລາ 2009 ກ່ຽວກັບການປ່ຽນຊື່ຂອງສານອຸທອນ ມາເປັນສານປະຊາຊົນພາກ ແລະ ມີການປັບປຸງບັນດານິຕິກຳ ທີ່ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສານເປັນຕົ້ນແມ່ນກົດໝາຍວ່າດ້ວຍສານປະຊາຊົນ ໄດ້ປັບປຸງ ແລະ ຖືກຮັບຮອງເອົາໃນວັນທີ 26 ພະຈິກ 2009 ຊຶ່ງມາດຕາ 2 ໄດ້ກຳນົດວ່າ **"ສານປະຊາຊົນ ແມ່ນອົງການຕຸລາການ ທີ່ເຮັດໜ້າທີ່ພິຈາລະນາຕັດສິນຄະດີ "**. ໂດຍໄດ້ແບ່ງສິດອຳນາດໃນການພິຈາລະນາຄະດີຄື:

- ຄະດີແພ່ງ ແລະ ຄະດີກ່ຽວກັບຄອບຄົວ ທີ່ມີຂໍ້ຂັດແຍ່ງມູນຄ່າ 300 ລ້ານກີບລົງມາ ແລະ ຄະດີອາຍາທີ່ກົດໝາຍກຳນົດໂທດສູງສຸດ ບໍ່ເກີນ 3 ປີ ແມ່ນສິດອຳນາດ ຂອງສານປະຊາຊົນເຂດ ເປັນຜູ້ພິຈາລະນາເປັນຂັ້ນຕົ້ນ.

- ຄະດີແພ່ງ ແລະ ຄະດີຄອບຄົວ ທີ່ມີຂໍ້ຂັດແຍ່ງເກີນ 300 ລ້ານກີບ, ຄະດີການຄ້າ ແລະ ຄະດີເດັກລວມທັງຄະດີອາຍາ ທີ່ກົດໝາຍກຳນົດໂທດສູງສຸດ ເກີນ 3 ປີ ແມ່ນນຳມາພິຈາລະນາເປັນຂັ້ນຕົ້ນຢູ່ສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ ແລະ ຄະດີຊຶ່ງສານຂັ້ນຕົ້ນໄດ້ຕັດສິນແລ້ວ ຊຶ່ງຄູ່ຄວາມບໍ່ພໍໃຈ ຈຶ່ງຂໍອຸທອນຂຶ້ນມາ ແມ່ນນຳມາພິຈາລະນາເປັນຂັ້ນອຸທອນ ຢູ່ສານປະຊາຊົນແຂວງ, ນະຄອນ.

- ຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ຄະດີອາຍາ ຊຶ່ງສານປະຊາຊົນເຂດ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ຊຶ່ງຄູ່ຄວາມບໍ່ພໍໃຈ ຈຶ່ງໄດ້ຂໍອຸທອນຂຶ້ນມາ ແມ່ນນຳມາພິຈາລະນາເປັນຂັ້ນອຸທອນ ຢູ່ສານປະຊາຊົນພາກ ແລະ ຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິຈາລະນາເປັນຂັ້ນອຸທອນແລ້ວ ຊຶ່ງຄູ່ຄວາມບໍ່ພໍໃຈ ຈຶ່ງໄດ້ຂໍລົບລ້າງຂຶ້ນມາ ແມ່ນນຳມາພິຈາລະນາເປັນຂັ້ນລົບລ້າງ ແຕ່ທາງດ້ານກົດໝາຍSຢູ່ສານປະຊາຊົນພາກ.

- ຄະດີທີ່ສານປະຊາຊົນພາກພິຈາລະນາເປັນຂັ້ນອຸທອນແລ້ວ ຊຶ່ງຄູ່ຄວາມບໍ່ພໍໃຈ ຈຶ່ງໄດ້ຂໍລົບລ້າງຂຶ້ນມາ ແມ່ນນຳມາພິຈາລະນາເປັນຂັ້ນລົບລ້າງແຕ່ທາງດ້ານກົດໝາຍ ຢູ່ສານປະຊາຊົນສູງສຸດ.

ການປັບປຸງດັ່ງກ່າວ ໄດ້ເຮັດໃຫ້ການຈັດຕັ້ງຂອງສານປະຊາຊົນ ມີການປ່ຽນແປງ, ເຕີບໃຫຍ່ຂະຫຍາຍຕົວ ແລະ ພັດທະນາຂຶ້ນຢ່າງກ້າວກະໂດດ ຊຶ່ງມາຮອດປັດຈຸບັນການຈັດຕັ້ງ ຂອງສານປະຊາຊົນໃນທົ່ວປະເທດປະກອບດ້ວຍ: ສານປະຊາຊົນສູງສຸດ 01 ແຫ່ງ, ສານປະຊາຊົນພາກ 03 ແຫ່ງ, ສານປະຊາຊົນແຂວງ, ນະຄອນ 17 ແຫ່ງ ແລະ ສານປະຊາຊົນເຂດ 39 ແຫ່ງ, ສານທະຫານ 04 ແຫ່ງ. ໄປຄຽງຄູ່ກັບການປັບປຸງການຈັດຕັ້ງ, ການດຳເນີນຄະດີ ກໍໄດ້ມີການປັບປຸງໄປພ້ອມໆກັນ ໄດ້ເຮັດໃຫ້ຄຸນນະພາບນັບມື້ນັບສູງຂຶ້ນ ຕາມທິດກະທັດລັດສົມເຫດສົມຜົນ ແລະ ມີປະສິດທິຜົນ, ມີການປະສານສົມທົບກັນ ເພື່ອແກ້ໄຂຂໍ້ຂັດແຍ່ງ ແລະ ຄະດີຕ່າງໆ ຕາມລະບຽບກົດໝາຍ, ສາມາດປົກປັກຮັກສາສິດ ແລະ ຜົນປະໂຫຍດຂອງລັດ, ຂອງລວມໝູ່ ແລະ ຂອງພົນລະເມືອງໄດ້ດີຂຶ້ນ. ອັນທີ່ພົ້ນເດັ່ນໃນການປັບປຸງ ແລະ ພັດທະນາລະບົບສານປະຊາຊົນໃນໄລຍະນີ້ ແມ່ນການຫັນ

ງົບປະມານຂອງສານໃຫ້ຂຶ້ນກັບສາຍຕັ້ງ ຊຶ່ງຖືເປັນການພັດທະນາແບບກ້າວກະໂດດຂອງລະບົບສານປະຊາຊົນພວກເຮົາ.

ມາຮອດປະຈຸບັນລະບົບສານປະຊາຊົນປະກອບມີ: ສານປະຊາຊົນສູງສຸດ 1 ແຫ່ງ, ສານປະຊາຊົນພາກ 3 ແຫ່ງ, ສານປະຊາຊົນແຂວງ, ນະຄອນຫລວງ 18 ແຫ່ງ ສານປະຊາຊົນເຂດ 43 ແຫ່ງ ແລະ ສານທະຫານ 4 ແຫ່ງ, ມີພະນັກງານທັງໝົດ 1.962 ຄົນ, ຍິງ 717 ຄົນ, ໃນນີ້ມີຜູ້ພິພາກສາ 464 ຄົນ, ຍິງ 103 ຄົນ, ຜູ້ຊ່ວຍຜູ້ພິພາກສາ 389 ຄົນຍິງ 135 ຄົນ, ຈ່າສານ 154 ຄົນຍິງ 88 ຄົນ ແລະ ພະນັກງານບໍລິຫານ-ວິຊາການຈຳນວນໜຶ່ງ.ໃນນັ້ນສານປະຊາຊົນເຂດມີຫ້ອງການເຮັດວຽກຖາວອນແລ້ວ 31 ແຫ່ງ, ຍັງ 11 ແຫ່ງ, ສານປະຊາຊົນແຂວງມີຫ້ອງການເຮັດວຽກຖາວອນແລ້ວ 11 ແຫ່ງ ຍັງ 7 ແຫ່ງ.ສານປະຊາຊົນພາກມີຫ້ອງການເຮັດວຽກຖາວອນແລ້ວ 2 ແຫ່ງ ຍັງ 1.

ຕະຫລອດໄລຍະ 36 ປີ ຜ່ານມາ, ສານປະຊາຊົນໄດ້ຮັບການປັບປຸງ ກໍ່ສ້າງນັບມື້ນັບເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ ສາມາດຍາດໄດ້ຜົນງານຫລາຍດ້ານ ຊຶ່ງສະແດງອອກບາງດ້ານຕົ້ນຕໍຄື:

- ສຶກສາອົບຮົມການເມືອງແນວຄິດ, ກໍ່ສ້າງ ແລະ ບຳລຸງພະນັກງານສານປະຊາຊົນ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິດທຳປະຕິວັດ, ມີນ້ຳໃຈຮັກຊາດ, ມີຄວາມຈົງຮັກພັກດີ ຕໍ່ອຸດົມການສັງຄົມນິຍົມ, ຕໍ່ພັກ, ຕໍ່ປະຊາຊົນ ແລະ ປະເທດຊາດ. ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ວຽກງານ, ມີຫຼັກໝັ້ນຊົນຊັ້ນກຳມະກອນຢ່າງເລິກເຊິ່ງ ໃນການພິຈາລະນາຕັດສິນຄະດີ ຊຶ່ງເຮັດໃຫ້ປະຊາຊົນມີຄວາມເຊື່ອຖື, ຮັກແພງ ແລະ ເຊື່ອໝັ້ນ ຕໍ່ການຈັດຕັ້ງຂອງສານປະຊາຊົນນັບມື້ນັບສູງຂຶ້ນ.

- ປັບປຸງກໍ່ສ້າງ ແລະ ພັດທະນາສານປະຊາຊົນ ໃຫ້ມີຄວາມໜັກແໜ້ນ ທາງດ້ານການເມືອງແນວຄິດ, ການຈັດຕັ້ງ ແລະ ແບບແຜນ ກົນໄກການເຮັດວຽກການບໍລິຫານສານ ບໍລິຫານຄະດີ ເພື່ອສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ເຮັດໃຫ້ການພິຈາລະນາແກ້ໄຂຄະດີຕ່າງໆ ມີຄວາມວ່ອງໄວ, ຖືກຕ້ອງ ແລະເປັນທຳຂຶ້ນເທື່ອລະກ້າວ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍລະບຽບກົດໝາຍ ຕາມແນວທາງນະໂຍບາຍຂອງພັກ-ລັດ ວາງອອກໃນແຕ່ລະໄລຍະ.

- ບັນດາພື້ນຖານໂຄງລ່າງ ແລະ ການປະກອບພາຫະນະ, ວັດຖຸອຸປະກອນເຕັກນິກ ໃຫ້ແກ່ການປະຕິບັດໜ້າທີ່ວຽກງານຂອງສານປະຊາຊົນ ກໍນັບມື້ເພີ່ມຂຶ້ນ.

- ຊີວິດ ການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງພະນັກງານ, ລັດຖະກອນ ກໍໄດ້ຮັບການປັວແປງ ດີຂຶ້ນກວ່າເກົ່າ, ບົດບາດ ແລະ ຄວາມສາມາດນຳ ພາຂອງພັກ ຢູ່ໃນລະບົບສານປະຊາຊົນ ກໍໄດ້ມີການປັບປຸງ ດີຂຶ້ນເປັນກ້າວໆ ມີຫຼາຍໜ່ວຍພັກຂອງສານປະຊາຊົນແຕ່ລະຂັ້ນ ໄດ້ຮັບການຍັ້ງຢືນເປັນໜ່ວຍພັກເຂັ້ມແຂງ ຮູ້ນຳພາຮອບດ້ານ.

ດ້ວຍຜົນງານ ແລະ ຄຸນງາມຄວາມດີດັ່ງກ່າວມານັ້ນ, ພັກ-ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າໄດ້ຍ້ອງຍໍຊົມເຊີຍສານປະຊາຊົນວ່າ: ເປັນອົງການໜຶ່ງທີ່ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ, ເປັນອົງການທີ່ມີສິນທຳ, ຍຸຕິທຳ, ໃຫ້ຄວາມເຊື່ອໝັ້ນ, ເຫລື້ອມໃສ ສັດທາ ແລະໄວ້ເນື້ອເຊື່ອໃຈໃນການປົກປ້ອງສິດ ຜົນປະໂຫຍດຂອງຊາດ, ຂອງປະຊາຊົນ ກໍຄືແນວທາງນະໂຍບາຍຂອງພັກ, ລະບົບກົດໝາຍຂອງລັດ ປະກອບສ່ວນເຮັດໃຫ້ປະເທດຊາດມີສະຖຽນລະພາບ, ປະຊາຊົນສາມັກຄີປອງດອງ, ສັງຄົມມີຄວາມຍຸຕິທຳຂຶ້ນເປັນກ້າວ ໆ ໂດຍພັກ, ລັດ ໄດ້ຕົກລົງປະດັບຫລຽນໄຊອິດສະລະຊັ້ນ I, ຫຼຽນກາທີລະນຶກ 35 ປີ ໃຫ້ສານປະຊາຊົນ ໃນ

ຖານະເປັນຕົວແທນ ໃຫ້ແກ່ສານປະຊາຊົນໃນທົ່ວປະເທດຢ່າງສົມກຽດ. ພ້ອມດຽວກັນນັ້ນ ສານປະຊາຊົນຫລາຍແຫ່ງ ກໍໄດ້ຮັບການ ຍ້ອງຍໍ ຊົມເຊີຍຈາກຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ກໍຄືປະຊາຊົນບັນດາເຜົ່າ ເຮັດໃຫ້ບົດບາດ, ອິດ ທິພົນຂອງສານປະຊາຊົນ ນັບມື້ນັບສູງຂຶ້ນຢ່າງບໍ່ຢຸດຢັ້ງ.

ສຳລັບສົກປີ 2017-2018 ຄະດີຢູ່ສານຂັ້ນຕົ້ນ(ສານເຂດ, ແຂວງ, ນະຄອນຫຼວງ ແລະ ສານທະຫານພາກ ) ຈຳນວນ4.654ເລື່ອງ, ຄ້າງມາແຕ່ກ່ອນ 1.858 ເລື່ອງລວມທັງໝົດ 6.512 ເລື່ອງ, ໄດ້ຕັດສິນແລ້ວ 4.700ເລື່ອງກວມ 72,17 % ພາຍຫຼັງຕັດສິນແລ້ວຄູ່ຄວາມພໍໃຈ ແລະ ເຫັນດີນຳໄປຈັດຕັ້ງປະຕິບັດ 4.087 ເລື່ອງ ກວມ 86,95 %, ຄູ່ຄວາມ ບໍ່ພໍໃຈຂໍອຸທອນ 613ເລື່ອງ ກວມ 13,04 %.

+ ຄະດີຢູ່ສານຂັ້ນອຸທອນ ມີຄະດີຄ້າງມາ 363 ເລື່ອງ, ຂໍອຸທອນຂຶ້ນມາໃໝ່ 613 ເລື່ອງ ລວມທັງໝົດ 976 ເລື່ອງ, ໄດ້ພິພາກສາໄປແລ້ວ 598 ເລື່ອງ ກວມ 75,12 %, ພາຍຫຼັງພິພາກສາແລ້ວ ຄູ່ຄວາມພໍໃຈ ແລະ ເຫັນດີນຳໄປປະຕິບັດ 317ເລື່ອງ ກວມ 53,01 %, ຄູ່ຄວາມບໍ່ພໍໃຈຂໍລົບລ້າງ 281ເລື່ອງ ກວມ 46,98% ຂອງຈຳນວນຄະດີທີ່ສານຂັ້ນອຸທອນໄດ້ພິພາກສາ.

+ ຄະດີຢູ່ສານຂັ້ນລົບລ້າງ ມີຄະດີຄ້າງມາ 134 ເລື່ອງ ຂໍລົບລ້າງຂຶ້ນມາໃໝ່ 281 ເລື່ອງ ລວມທັງໝົດ 415 ໄດ້ພິພາກສາໄປແລ້ວ 270 ເລື່ອງ ກວມ 65,06%, ຍັງຄ້າງ 145 ເລື່ອງ.

+ ຄະດີ ເປັນຂັ້ນຮື້ຟື້ນ ມີທັງໝົດ 12 ເລື່ອງ, ແກ້ໄຂແລ້ວ 05 ເລື່ອງ ຍັງຄ້າງ 07 ເລື່ອງ.

ເມື່ອທຽບໃສ່ແຜນການແລ້ວ ການແກ້ໄຂຄະດີ ຍັງບໍ່ທັນບັນລຸຕາມແຜນການທີ່ຕັ້ງໄວ້ 85%, ອັດຕາການ ຂໍອຸທອນ 13,04 % ລື່ນແຜນການທີ່ຕັ້ງໄວ້ 15%. ແຕ່ເຖິງຢ່າງໃດກໍຕາມ ເມື່ອປະເມີນທາງດ້ານຄຸນນະພາບແລ້ວ ເຫັນວ່າການຕັດສິນຄະດີຂອງສານ ມີຄຸນນະພາບ ແລະ ປະສິດທິພາບດີຂຶ້ນ ເຫັນໄດ້ຈາກຕົວເລກຂ້າງເທິງນັ້ນ ເຫັນວ່າການພໍໃຈ ແລະ ເຫັນດີນຳໄປປະຕິບັດ ກວມອັດຕາສ່ວນຫຼາຍ, ຕົວເລກການຂໍອຸທອນ ແລະ ບໍ່ພໍໃຈຕໍ່ການຕັດ ສິນຂອງສານ ກວມອັດຕາສ່ວນໜ້ອຍ.

ນີ້ກໍສະແດງວ່າການເກັບກຳຂໍ້ມູນຫຼັກຖານ, ການຄົ້ນຄວ້າພິຈາລະນາຄະດີຂອງຜູ້ພິພາກສາ ໂດຍສະເພາະຢູ່ສານຂັ້ນຕົ້ນມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຈຶ່ງເຮັດໃຫ້ການພິຈາລະນາຕັດສິນ ແລະ ພິພາກສາຄະດີຖືກຕ້ອງ, ເປັນທຳ, ມີຄວາມໂປ່ງໃສ, ຖືກກັບກົດໝາຍ ແລະ ຄວາມເປັນຈິງ ເຮັດໃຫ້ຄູ່ຄວາມພໍໃຈ ແລະ ຍອມຮັບຕໍ່ຄຳຕັດສິນຂອງສານ; ຄວາມຮັບຮູ້ເຂົ້າໃຈຂອງພະນັກງານ ແລະ ປະຊາຊົນຕໍ່ສານປະຊາຊົນນັບມື້ນັບສູງຂຶ້ນ, ຄຳຮ້ອງຂໍຄວາມເປັນທຳຕໍ່ສານຫລຸດລົງ, ທາງສຽງຈົ່ມວ່າທີ່ມີຕໍ່ສານ ນັບມື້ນັບຫຼຸດໜ້ອຍຖອຍລົງເທື່ອລະກ້າວ.

ຜົນງານການເຄື່ອນໄຫວ ແລະ ການເຕີບໃຫຍ່ຂະຫຍາຍຕົວແຕ່ລະໄລຍະນັ້ນ ແມ່ນຍ້ອນໄດ້ຮັບຄວາມເອົາໃຈໃສ່ຊີ້ນຳ- ນຳພາ, ສຶກສາອົບຮົມ, ທະນຸບຳລຸງຢ່າງໃກ້ສິດ, ແທດເຖິງຂອງພັກ-ລັດ ແລະ ສະພາແຫ່ງຊາດ; ໄດ້ຮັບຄວາມຮ່ວມມື, ປະສານສົມທົບກັບບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ, ໄດ້ຮັບການອຸ້ມຊູຊ່ວຍເຫຼືອ ຖະໜອມທອມຮັກຈາກປະຊາຊົນບັນດາເຜົ່າ ແລະ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກສານ ແລະ ປະຊາຊົນບັນດາປະເທດເພື່ອນມິດຍຸດທະສາດ ເປັນຕົ້ນ ສສ ຫວຽດນາມ, ສປປ ຈີນ ແລະ ໄດ້ຮັບການຊ່ວຍເຫລືອຈາກບັນດາປະເທດເພື່ອນມິດ, ຈາກອົງການຈັດຕັ້ງສາກົນຕ່າງໆ. ພິເສດກໍແມ່ນຍ້ອນຄວາມເອົາໃຈໃສ່ຊີ້ນຳ-ນຳພາຂອງຄະນະພັກ-ຄະນະນຳ ຂອງສານປະຊາຊົນ ບວກກັບຄວາມເອົາໃຈໃສ່ ແລະ ຕັດສິນໃຈສູງ ຜ່ານຜ່າອຸປະ

ສັກຫຍຸ້ງຍາກນາໆປະການ ປະຕິບັດໜ້າທີ່ວຽກງານຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ ຂອງພະນັກງານສານປະຊາຊົນໝົດທຸກຄົນ ຢູ່ໃນສານປະຊາຊົນແຕ່ລະຂັ້ນ, ແຕ່ລະລຸ່ນ ໃນແຕ່ລະໄລຍະ ຈຶ່ງເຮັດໃຫ້ສານປະຊາຊົນມີຜົນງານອັນຍິ່ງໃຫຍ່ຄືດັ່ງກ່າວມານັ້ນ.

## ຮຽນບົດບັນດາສະຫາຍ.

ຜົນງານທີ່ສານປະຊາຊົນຍາດມາໄດ້ ແມ່ນມີຄວາມໝາຍປະຫວັດສາດ ແລະ ໃຫຍ່ຫຼວງທີ່ສຸດໃນການປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດນັ້ນ ກໍແມ່ນຍ້ອນພວກເຮົາໄດ້ເອົາໃຈໃສ່ເສີມຂະຫຍາຍ ແລະ ປະຕິບັດຕາມ 6 ມູນເຊື້ອຂອງສານປະຊາຊົນຄື:

**1. ຍາມໃດກໍມີຄວາມຈົງຮັກພັກດີ ຕັ້ງຕໍ່ບໍລິສຸດຕໍ່ພັກ, ຕໍ່ປະເທດຊາດ, ຕໍ່ປະຊາຊົນ.**

ສານປະຊາຊົນ ແມ່ນອົງການທີ່ຈົງຮັກພັກດີ, ຕັ້ງຕໍ່ບໍລິສຸດຕໍ່ພັກ, ເຊື່ອໝັ້ນ ແລະ ປະຕິບັດຕາມອຸດົມການຂອງພັກຢ່າງຕາຍໃຈ ດັ່ງນັ້ນ ໃນມາດ ຕາ 17 ຂອງກົດໝາຍວ່າດ້ວຍສານປະຊາຊົນ ໃນປະໂຫຍກໜຶ່ງ ກໍານົດໄວ້ວ່າ: " **ສານປະຊາຊົນ ແມ່ນອົງການຕຸລາການ, ມີພາລະບົດບາດ ດໍາເນີນການພິຈາລະນາຕັດສິນຄະດີ ....ປົກປັກຮັກສາ ແລະ ເສີມຂະຫຍາຍໝາກຜົນຂອງການປະຕິວັດ, ລະບອບການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ...**" ດັ່ງນັ້ນຜູ້ພິພາກສາ, ພະນັກງານຂອງສານປະຊາຊົນ ລ້ວນແຕ່ຖືກຝຶກຝົນຫລໍ່ຫລອມຄຸນທາດການເມືອງ, ຄຸນສົມບັດ ສິນທໍາປະຕິວັດ ອັນດີງາມ ແລະ ເສີມຂະຫຍາຍມູນຂອງພັກ ຂອງຊາດໃນການປະຕິບັດໜ້າທີ່ວຽກງານ.

ສານປະຊາຊົນ ພິຈາລະນາຕັດສິນຄະດີໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມທີ່ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະນັ້ນຍາມໃດກໍປະຕິບັດໜ້າທີ່ ເພື່ອປົກປ້ອງສິດຜົນປະໂຫຍດຂອງຊົນຊັ້ນປົກຄອງ ໂດຍຖືຜົນປະໂຫຍດຂອງຊາດເປັນຫລັກ.

ສານປະຊາຊົນ ຍຶດຖືສະເໜີວ່າ ປະທານ, ຮອງປະທານ ແລະ ຜູ້ພິພາກສາ ແມ່ນມາຈາກປະຊາຊົນ ເປັນຜູ້ແຕ່ງຕັ້ງຂຶ້ນມາ ໂດຍຜ່ານຕົວແທນແຫ່ງສິດອໍານາດຂອງປະຊາຊົນ ຄືຄະນະປະຈໍາສະພາເປັນຜູ້ແຕ່ງຕັ້ງຕາມທີ່ກໍານົດໄວ້ໃນມາດຕາ 82 ຂອງລັດຖະທໍາມະນູນ ແລະ ມາດຕາ 37 ຂອງກົດໝາຍວ່າດ້ວຍສານປະຊາຊົນ, ສະນັ້ນ ການປະຕິບັດໜ້າທີ່ວຽກງານແມ່ນໂດຍອໍານາດຂອງປະຊາຊົນ ຈຶ່ງລະນຶກສະເໜີວ່າຕ້ອງບໍລິການຮັບໃຊ້ປະຊາຊົນຢ່າງສຸດໃຈ, ຖືປະຊາຊົນເປັນກົກ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນທຸກຄົນ.

**2. ສານປະຊາຊົນ ຍາມໃດກໍມີມູນເຊື້ອເຄົາລົບ ແລະ ປະຕິບັດຕາມກົດໝາຍ.**

ໃນພຶດຕິກໍາແຫ່ງການປະຕິບັດໜ້າທີ່ວຽກງານຂອງສານ ໂດຍສະເພາະໃນການພິຈາລະນາຕັດສິນຄະດີ ຜູ້ພິພາກສາ ຕ້ອງເຄົາລົບລັດຖະທໍາມະນູນ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ, ໃນເວລາລົງຄໍາຕັດສິນຕ້ອງອີງໃສ່ຫລັກຖານ ແລະ ອີງໃສ່ກົດໝາຍ ເປັນບ່ອນອີງໃນການຕັດສິນຄະດີ ຕາມທີ່ກໍານົດໄວ້ໃນມາດຕາ 11 ແລະ 12 ຂອງກົດໝາຍວ່າດ້ວຍສານປະຊາຊົນ.

**3. ສານປະຊາຊົນ ຍາມໃດກໍມີມູນເຊື້ອໃນການພິຈາລະນາຕັດສິນເປັນໝູ່ຄະນະ.**

ການພິຈາລະນາຕັດສິນຄະດີ ບໍ່ວ່າຢູ່ສານຂັ້ນໃດ ຕ້ອງດຳເນີນເປັນໝູ່ຄະນະ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍສານປະຊາຊົນ ຊຶ່ງຕ້ອງປະກອບດ້ວຍຜູ້ພິພາກສາ 3 ຄົນ, ຄົນໜຶ່ງ ເປັນປະທານ, ອີກສອງຄົນເປັນຄະນະ, ການລົງຄຳເຫັນໃຫ້ຖືເອົາຕາມສຽງສ່ວນຫລາຍ. ດັ່ງນັ້ນ, ການຕັດສິນຂອງສານ ຍາມໃດກໍບໍ່ໄດ້ເຮັດຕາມລຳພັງໃຈຂອງຜູ້ໃດຜູ້ໜຶ່ງ ຫລື ພິຈາລະນາຫລັກຖານແຕ່ຝ່າຍໃດຝ່າຍໜຶ່ງ ແຕ່ຕ້ອງນຳເອົາທຸກຂໍ້ມູນຫລັກຖານຂອງຄູ່ຄວາມທັງສອງຝ່າຍມາພິຈາລະນາໃນໝູ່ຄະນະ ເພື່ອຄວາມເປັນເອກະພາບ ແລ້ວຈຶ່ງພິຈາລະນາຕັດສິນ, ຍ້ອນແນວນັ້ນ ສານປະຊາຊົນ ຈຶ່ງມີມູນເຊື້ອແຫ່ງຄວາມສາມັກຄີເປັນເອກະພາບພາຍໃນແໜ້ນແຟ້ນ ປະຊາທິປະໄຕ, ເຮັດວຽກຕາມຫລັກການໂປ່ງໃສ, ມີການແບ່ງຄວາມຮັບຜິດຊອບ ແລະມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢ່າງກົມກຽວ.

**4. ສານປະຊາຊົນ ຍາມໃດກໍມີມູນເຊື້ອ ຊື່ສັດ ສຸຈະລິດ.**

ໃນການພິຈາລະນາຕັດສິນຄະດີ ສານປະຊາຊົນ ໄດ້ປະເຊີນກັບສິ່ງທົດສອບຫລາຍປະການ ເພາະເຮັດວຽກກັບສອງຝ່າຍ ຄື ຝ່າຍໂຈດ ແລະ ຈຳເລີຍ ທີ່ຕໍ່ສູ້ກັນ ຊຶ່ງຕ່າງຝ່າຍຕ່າງກໍຕ້ອງການເອົາຊະນະຄະດີ ໂດຍໃຊ້ຮູບການຕ່າງໆ ເພື່ອຊື້ຈ້າງຈອບອອຍ ພະນັກງານຂອງສານ ແຕ່ພະນັກງານ, ຜູ້ພິພາກສາ ກໍມີສະຕິ ລະວັງຕົວ ບໍ່ຫລົງກົນອຸບາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ ໂດຍລະນຶກສະເໝີວ່າ ປະຊາຊົນ ມີຄະດີເຂົ້າມາສານ ລ້ວນແຕ່ແມ່ນຜູ້ທີ່ມີຄວາມທຸກທາງດ້ານຈິດໃຈ ດັ່ງນັ້ນ ພວກເຮົາຕ້ອງໃຫ້ຄວາມຊ່ວຍເຫລືອ, ແກ້ໄຂບັນຫາໃຫ້ເຂົາເຈົ້າຢ່າງຖືກຕ້ອງ ແລະ ເປັນທຳ ບໍ່ໄປຊໍ້າເຕີມເຂົາເຈົ້າ ຊຶ່ງມູນເຊື້ອດັ່ງກ່າວ ໄດ້ຊຶມເຂົ້າໃນຈິດວິນຍານຂອງຜູ້ພິພາກສາ ແລະ ພະນັກງານສານທຸກຄົນ, ທຸກລຸ້ນ ຕະຫລອດມາ ດັ່ງຄຳເວົ້າຂອງທ່ານ ອຸ່ນເນື້ອ ພົມມະສອນ ປະທານສານປະຊາຊົນສູງສຸດ ຜູ້ທຳອິດຂອງສປປ ລາວ ກ່າວໃນກອງປະຊຸມໃຫຍ່ຜູ້ພິພາກສາທົ່ວປະເທດວ່າ" **ຜູ້ພິພາກສາ ຄືຜູ້ມີສິນທຳ ແລະ ຍຸຕິທຳ, ສີຂາວ ສີດຳ ຕ້ອງຈຳແນກໃຫ້ຊັດເຈນ, ບໍ່ລະເວັ້ນອຳນາດ, ບໍ່ປະມາດສາມັນຊົນ ເຖິງຊີວິດຈະຍາກຈົນ ແຕ່ໃຈຕົນບໍ່ໝົ່ນໝອງ"**, ພ້ອມກັນນັ້ນທ່ານ ຄຳພັນ ສິດທິດຳພາ ປະທານສານປະຊາຊົນສູງສຸດ ກໍໄດ້ກ່າວໃນງານໂຮມຊຸມນຸມມິດຕິງ ຄົບຮອບ 30 ປີ ວັນສ້າງຕັ້ງສານປະຊາຊົນ ບາງຕອນໄດ້ກ່າວວ່າ **"ການບໍລິການດ້ວຍຄວາມຍິ້ມແຍ້ມແຈ່ມໃສ ຊ່ວຍແກ້ໄຂຄະດີໄດ້ບາດກ້າວໜຶ່ງ, ການເຮັດວຽກ ດ້ວຍຄວາມຊື່ສັດ ສຸດຈະຫລິດ ຄືບາດກ້າວທຳອິດຂອງການຕັດສິນ ທີ່ຖືກຕ້ອງ "**. ດັ່ງນັ້ນ ຈຶ່ງຖືວ່າພະນັກງານຂອງສານທຸກລຸ້ນທຸກສະໄໝ ໄດ້ຖືສຳຄັນການພິຈາລະນາຕັດສິນຄະດີ ຕ້ອງມີຄວາມຊື່ສັດ ສຸຈະຫລິດ.

**5. ມູນເຊື້ອ ແຫ່ງການດຸໝັ່ນ ຂະຫຍັນພຽນ.**

ຜູ້ພິພາກສາ, ພະນັກງານຂອງສານປະຊາຊົນ ຍາມໃດກໍເອົາໃຈໃສ່ ຝຶກຝົນຫລໍ່ຫລອມຕົນເອງ ໃຫ້ມີຄຸນສົມບັດ ສິນທຳປະຕິວັດ, ຍົກລະດັບຄວາມຮູ້ ຄວາມສາມາດຂອງຕົນເອງໃຫ້ສູງຂຶ້ນ, ມີຄວາມຈູບຈ້າວ ຫ້າວຫັນປະຕິບັດໜ້າທີ່ວຽກງານ ເພື່ອເຮັດສຳເລັດໜ້າທີ່ ໃນແຕ່ລະໄລຍະ ຍ້ອນມີຄວາມຂະຫຍັນ ໝັ່ນພຽນ ຄືແນວນັ້ນຈຶ່ງໄດ້ພ້ອມໃຈກັນກຳນົດຄາດໝາຍສູ້ຊົນ ໃນການພິຈາລະນາແກ້ໄຂຄະດີເປັນແຕ່ລະໄລຍະເຊັ່ນ: ໃນມະຕິກອງປະຊຸມໃຫຍ່ຜູ້ພິພາກສາຄັ້ງທີ VI ໄດ້ວາງຄາດໝາຍສູ້ຊົນແກ້ໄຂຄະດີໃຫ້ໄດ້ 85 % ຂຶ້ນເມືອ ແລະ ຄັ້ງທີ VII ໄດ້ວາງຄາດໝາຍສູ້ຊົນພິຈາລະນາແກ້ໄຂຄະດີໃຫ້ໄດ້ 90% ຂຶ້ນເມືອ ຂອງຈຳນວນຄະດີເຂົ້າມາສານ, ນອກຈາກຈະມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ວິຊາສະເພາະ ແລ້ວ ພະນັກງານຂອງສານປະຊາຊົນ ຍັງໄດ້ຢຶດຖື

ຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອິງ ດ້ວຍການສ້າງເສດຖະກິດຄອບຄົວ, ປະກອບສ່ວນໃນການເພີ່ມພູນຜະລິດຜົນ ແລະ ຮັກການອອກແຮງງານ.

**6. ມູນເຊື້ອແຫ່ງການພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ.**

ເພື່ອປະຕິບັດຕາມແນວທາງການຕ່າງປະເທດຂອງພັກ ສານປະຊາຊົນ ໄດ້ຍຶດຖືການພົວພັນຮ່ວມມືສາກົນເປັນວຽກໜຶ່ງທີ່ສໍາຄັນ ເພື່ອຍາດແຍ່ງການຊ່ວຍເຫລືອ, ແລກປ່ຽນບົດຮຽນໃນວຽກງານຍຸຕິທໍາ ກັບບັນດາປະເທດເພື່ອນມິດທີ່ກ້າວໜ້າໃນໂລກ ແລະ ອົງການຈັດຕັ້ງສາກົນຕ່າງໆ, ພົວພັນຮ່ວມມືສາມັກຄີແບບພິເສດ ແລະ ຮອບດ້ານກັບສານປະຊາຊົນແຫ່ງສສ ຫວຽດນາມ ອ້າຍນ້ອງ, ເສີມຂະຫຍາຍການພົວພັນຮ່ວມມືກັບສານປະຊາຊົນ ແຫ່ງ ສປ ຈີນ.

## ຮຽນບັນດາສະຫາຍ .

ເພື່ອເຮັດໃຫ້ຄາດໝາຍສູ້ຊົນທີ່ວາງໄວ້ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ຈະສຸມໃສ່ບາງດ້ານຕົ້ນຕໍຄື:

1. ສືບຕໍ່ສຶກສາອົບຮົມການເມືອງ ແນວຄິດໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານ ໃຫ້ມີຄຸນທາດການເມືອງ,ມີຈັນຍາບັນ-ຈັນຍາທໍາ ໜັກແໜ້ນ, ມີນໍ້າໃຈຮັກຊາດ, ຮັບໃຊ້ປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ພັກ, ມີຄວາມສາມັກຄີເປັນປຶກແຜ່ນ, ມີສະຕິລະວັງຕົວຕໍ່ທຸກເລ່ຫຼ່ຽມກົນອຸບາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ, ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນນໍາພະນັກງານຢ່າງເດັດຂາດ, ສ້າງໃຫ້ພະນັກງານມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ.ເອົາໃຈ ໃສ່ກວດກາ, ປະເມີນ ແລະ ຄັດເລືອກຜູ້ພິພາກສາດີ-ເກັ່ງ ຕາມມາດຖານ ແລະ ເງື່ອນໄຂທີ່ກໍານົດ ເພື່ອຊອກໃຫ້ເຫັນຜູ້ພິພາກສາດີ, ຜູ້ພິພາກສາເກັ່ງ ໃຫ້ໄດ້ມາດຕະຖານ ແລະ ຕາມເງື່ອນໄຂ ທີ່ວາງໄວ້ຢ່າງເຄັ່ງຄັດ ຊອກໃຫ້ເຫັນເລື່ອງຈິງຄົນແທ້ວຽກດີ, ຄົນເດັ່ນ ຢ່າງແທ້ຈິງ.

2. ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ພິພາກສາຄັ້ງທີ IX ໃຫ້ລົງສູ່ການປະຕິບັດໜ້າທີ່ວິຊາສະເພາະຢ່າງເລິກເຊິ່ງ, ເຖິງຖອງ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ຕັ້ງໜ້າປະຕິບັດຢ່າງຈິງຈັງ ພ້ອມທັງມີການຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ເປັນປົກກະຕິ.

3. ສືບຕໍ່ປັບປຸງການຈັດຕັ້ງຂອງສານປະຊາຊົນໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ໜັກແໜ້ນທາງດ້ານບຸກຄະລາກອນ.

- ສູ້ຊົນສ້າງຕັ້ງຄະນະສານປົກຄອງຂຶ້ນຢູ່ນະຄອນຫຼວງວຽງຈັນ ໃນຕົ້ນປີ 2018 ແລະ ຂະຫຍາຍໄປແຂວງອື່ນທີ່ມີເງື່ອນໄຂ.

- ເອົາໃຈໃສ່ສືບຕໍ່ຈັດຕັ້ງຄະນະສານເຄື່ອນທີ່ລົງໄປຕັດສິນຢູ່ເມືອງທີ່ຫ່າງໄກ ຫຼື ຢູ່ຄ້າຍຄຸ້ມຂັງ ເພື່ອຮັບປະ ກັນ ໃຫ້ຄູ່ຄວາມເຂົ້າຫາການຕັດສິນຂອງສານໄດ້ສະດວກ ແລະ ຮັບປະກັນຄວາມປອດໄພໃນການເຄື່ອນຍ້າຍຜູ້ຕ້ອງຫາ ຫຼື ຈໍາເລີຍມາຕັດສິນຢູ່ສານ. ປະສານສົມທົບ ແລະ ຄົ້ນຄວ້າແຕ່ງຕັ້ງໜ່ວຍງານ ແລະຈັດສົ່ງພະນັກງານຂອງສານໄປປະຈໍາການ ອໍານວຍຄວາມສະດວກໃນການດໍາເນີນຄະດີໃຫ້ແກ່ປະຊາຊົນຢູ່ເມືອງທີ່ຢູ່ຫ່າງໄກ.

4. ສືບຕໍ່ຊຸກຍູ້, ຕິດຕາມການຜັນຂະຫຍາຍວຽກງານສາມສ້າງຕິດພັນກັບຄະດີສາມຂັ້ນລົງຈັດຕັ້ງປະຕິບັດ ຢູ່ສານປະຊາຊົນພາກ, ແຂວງ ແລະ ສານປະຊາຊົນເຂດ ໂດຍການຫັນພະນັກງານຂອງສານຂັ້ນເທິງ ລົງຮາກຖານຕາມສາຍຕັ້ງໃຫ້ຫຼາຍ, ມີການສົ່ງພະນັກງານໄປແລກປ່ຽນບົດຮຽນກັນລະຫວ່າງສານກ່ຽວກັບການບໍລິຫານສານ ແລະ ການດໍາເນີນຄະດີ ໃຫ້ມີຄຸນນະພາບ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

5. ສູ້ຊົນພິຈາລະນາແກ້ໄຂຄະດີ ທີ່ເຂົ້າມາສານທຸກຂັ້ນໃຫ້ບັນລຸ 85% ຂຶ້ນໄປ ໂດຍເນັ້ນເຖິງຄຸນນະພາບ, ປະສິດທິພາບເປັນຕົ້ນຕໍ. ເອົາໃຈໃສ່ເກັບກຳຂໍ້ມູນຫຼັກຖານໃຫ້ມີຄວາມຄົບຖ້ວນ, ພຽງພໍ, ລົງເບິ່ງເຫດການບ່ອນທີ່ຂັດແຍ່ງ ແລະ ນຳເອົາບຸກຄົນທີ່ສາມເຂົ້າມຮ່ວມໃນການດຳເນີນຄະດີແຕ່ຫົວທີ ໂດຍສ້າງກົນໄກຊຸກຍູ້, ສົ່ງເສີມໃຫ້ຄູ່ຄວາມມີສ່ວນຮ່ວມໃນການດຳເນີນຄະດີຢູ່ສານໃຫ້ຫຼາຍຂຶ້ນ ໂດຍສຸມໃສ່:

- ມອບໃຫ້ແຕ່ລະຄະນະສານ ແລະ ກົມຄຸ້ມຄອງວິຊາການສະຫຼຸບ-ສັງລວມຂໍ້ມູນການດຳເນີນຄະດີຕົວຈິງ ທີ່ພົບເຫັນວ່າມີຂໍ້ຄົງຄ້າງຢ່າງລະອຽດ ແລ້ວສ້າງເປັນຄຳແນະນຳກ່ຽວກັບການດຳເນີນຄະດີ ແລະ ອະທິບາຍມາດຕາຂອງກົດໝາຍເພື່ອໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດເປັນເອກະພາບກັນ.

- ລົງຊຸກຍູ້, ຕິດຕາມ ແລະ ແນະນຳກ່ຽວກັບການດຳເນີນຄະດີຂອງສານຂັ້ນລຸ່ມ ໂດຍຍົກເອົາບັນຫາພົບເຫັນມີຂໍ້ບົກຜ່ອງ ຫຼື ຄົງຄ້າງຜ່ານມາ ຂອງແຕ່ລະສານໄປປຶກສາຫາລື ຊອກຫາສາເຫດທີ່ພາໃຫ້ມີຄວາມບົກຜ່ອງເຊັ່ນ ການບໍ່ນຳເອົາບຸກຄົນທີ່ສາມມາເຂົ້າຮ່ວມ, ການບໍ່ລົງກວດກາບັນຫາທີ່ຂັດແຍ່ງຕົວຈິງ ແລະ ອື່ນໆ ນັ້ນເກີດຂຶ້ນ ຍ້ອນຄວາມຮັບຜິດຊອບຂອງຜູ້ຄົ້ນຄວ້າຄະດີ ຫຼື ສາເຫດອື່ນ ເພື່ອຫາທາງແກ້ໄຂບັນຫາດັ່ງກ່າວໃຫ້ໝົດໄປເທື່ອລະກ້າວ.

- ກວດກາປະເມີນຜົນຜູ້ພິພາກສາ, ພະນັກງານຂອງສານທີ່ເຮັດວຽກດີ, ມີຄຸນນະພາບເພື່ອຍ້ອງຍໍຊົມເຊີຍ, ຜູ້ທີ່ບົກພ່ອງ ຍ້ອນຂາດຄວາມຮູ້ ແລະ ປະສົບການ ເພື່ອກໍ່ສ້າງ ແລະ ຍົກລະດັບ, ຜູ້ທີ່ມີເຈດຕະນາບົກຜ່ອງ ເພື່ອປະຕິບັດວິໄນຢ່າງເຄັ່ງຄັດ.

6. ສືບຕໍ່ຄົ້ນຄວ້າປັບປຸງຮ່າງກົດໝາຍ ແລະ ອອກນິຕິກຳລຸ່ມກົດໝາຍຕ່າງໆ

7. ສືບຕໍ່ພັດທະນາການບໍລິຫານສານໃຫ້ມີຄຸນນະພາບ ແລະ ມີປະສິດທິພາບສູງ ໂດຍເລັ່ງໃສ່:

- ຈັດແບ່ງງົບປະມານເຂົ້າໃນໂຄງການ, ກິດຈະກຳຕ່າງໆ ໃຫ້ມີຄວາມເໝາະສົມ ຮັບປະກັນໃຫ້ໜ້າວຽກຕ່າງໆ ມີຜົນສຳເລັດ ແລະ ມີຄຸນນະພາບສູງ;

- ຄຸ້ມຄອງ, ຕິດຕາມໂຄງການກໍ່ສ້າງຫ້ອງການໃຫ້ດຳເນີນຕາມແຜນການ ແລະ ຊຳລະໜີ້ສິນໂຄງການກໍ່ສ້າງ ຕາມການອະນຸມັດ ແລະ ຕາມລະບຽບກົດໝາຍ;

- ຄຸ້ມຄອງ, ນຳໃຊ້ຊັບສົມບັດຂອງລັດໃຫ້ມີປະສິດທິຜົນ, ຖືກເປົ້າໝາຍ ແລະ ເກີດຜົນປະໂຫຍດສູງສຸດ ຕໍ່ການປະຕິບັດໜ້າທີ່ຢູ່ແຕ່ລະສານ;

- ໂຄສະນາວຽກງານຂອງສານ ແລະ ກົດໝາຍໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ເພື່ອສ້າງສະຕິກົດໝາຍຢູ່ໃນສັງຄົມໃຫ້ສູງຂຶ້ນ ດ້ວຍການພິມແຈກຢາຍປຶ້ມຈະເຂົ້າຫາຂະບວນການຍຸຕິທຳໄດ້ແນວໃດ, ແຜນວາດການດຳເນີນຄະດີ, ວາລະສານ , ບົດລະຄອນ ແລະ ຄັດຈ້ອນເອົາບາງໝວດບາງມາດຕາຂອງກົດໝາຍ ທີ່ສັງຄົມໃຫ້ຄວາມສົນໃຈ ແລະ ມີການລະເມີດຫຼາຍລົງໂຄສະນາເຜີຍແຜ່ຢູ່ໃນກຸ່ມບ້ານ, ຊຸມຊົນຕ່າງ.

9. ເພີ່ມທະວີປະສານສົມທົບ ແລະ ຂໍການຮ່ວມມືນຳຄະນະພັກ, ອົງການປົກຄອງແຕ່ລະຂັ້ນ, ຄະນະສະມາຊິກສະພາປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງກັບການດຳເນີນຄະດີ ເພື່ອປຶກສາຫາລືແກ້ໄຂບັນຫາທີ່ມີຄວາມຫຍຸ້ງຍາກ, ສັບສົນ, ການເກັບກຳ, ສະໜອງຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີໃຫ້ສານຢ່າງຖືກຕ້ອງ ແລະ ຄົບຖ້ວນ.

10. ເອົາໃຈໃສ່ຂຶ້ນບັນຊີສັບສົມບັດຂອງສານປະຊາຊົນ ໃຫ້ມີຄວາມລະອຽດ, ຈະແຈ້ງ ແລະ ຄຸ້ມຄອງ ນຳໃຊ້ໃຫ້ຖືກເປົ້າໝາຍ ເກີດປະໂຫຍດສູງສຸດ. ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານໃຫ້ຖືກຕ້ອງຕາມຫຼັກການ, ກຳນົດກົນໄກການບໍລິຫານສານ ໃຫ້ມີຄຸນນະພາບ ແລະ ປະສິດທິພາບສູງ. ສູ້ຊົນພັດທະນາພື້ນຖານໂຄງລ່າງຂອງສານປະຊາຊົນ ໃຫ້ມີຄວາມເໝາະສົມ ເປັນທີ່ເຄົາລົບເຊື່ອຖືຂອງສັງຄົມ.

11. ສືບຕໍ່ຈັດຕັ້ງປະຕິບັດບົດ ບັນທຶກຄວາມເຂົ້າໃຈລະຫວ່າງສານປະຊາຊົນສອງປະເທດ ລາວ-ຈີນ ແລະ ສານປະຊາຊົນ ແຫ່ງ ສສ ຫວຽດນາມ. ພົວພັນຮ່ວມມືກັບປະເທດບັນດາປະເທດໃນອາຊ່ຽນ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາທຶນຮອນ, ບົດຮຽນ, ປະສົບການດ້ານກົດໝາຍ ແລະ ວຽກງານຍຸຕິທຳ.

ໃນນາມຕາງໜ້າ............. ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງ ຄະນະພັກ, ຄະນະນຳ ຂອງສານປະຊາຊົນ ກໍຄືຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ຂອງສານປະຊາຊົນທຸກຂັ້ນທຸກຂະແໜງການວຽກງານ ຈົ່ງພ້ອມກັນເອົາໃຈໃສ່ຄົ້ນຄ້ວາເຊື່ອມຊຶມ ແລະ ຜັນຂະຫຍາຍມູນເຊື້ອຜົນງານ ກໍຄືທິດທາງແຜນການນີ້ເປັນຮູບປະທຳຕົວຈິງຫຼາຍຂຶ້ນ ນຳເອົາຜົນປະໂຫຍດສູງສຸດ ມາໃຫ້ປະຊາຊົນ, ມາໃຫ້ປະເທດ ຊາດ.

**(ຂໍຂອບໃຈ).**